**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----໐໓໐----

ກະຊວງ ໄປສະນີ,
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 330 /ປທສ.
ນະຄອນຫຼວງວຽງຈັນ, ວັນທີ: 11 FEB 2015

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຂັ້ນຄຸ້ມຄອງ ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ

- ອີງຕາມ ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ)ເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ລັດຖະມົນຕີວ່າການ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຂອບເຂດຄວາມຮັບຜິດຊອບ ໃນການຄຸ້ມຄອງການປະກອບການດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ລະຫວ່າງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກັບ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ/ນະຄອນ, ເພື່ອຮັບປະກັນຄຸນນະພາບຂອງການບໍລິການ ໃຫ້ມີຄວາມວ່ອງໄວ ແລະ ປອດໄພ, ແນໃສ່ສົ່ງເສີມ ການນຳໃຊ້ເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານຢ່າງກ້ວາງຂວາງ ແລະ ທົ່ວເຖິງ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ການແບ່ງຂັ້ນຄຸ້ມຄອງດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ**

ການແບ່ງຂັ້ນຄຸ້ມຄອງການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ແມ່ນການກຳນົດຄວາມຮັບຜິດ ຊອບໃນການຄຸ້ມຄອງ ແລະ ການອອກອະນຸຍາດ ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ລະຫວ່າງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກັບ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການໃຫ້ບໍລິການອິນເຕີເນັດ ກາເຟ** (Internet Cafe) ໝາຍເຖິງ ການປະກອບການ ສະໜອງບໍລິການເຂົ້າເຖິງອິນເຕີເນັດ ແກ່ຜູ້ຊົມໃຊ້ທົ່ວໄປ ໃນຂອບເຂດ ຮ້ານ ຫຼື ສະຖານທີ່ໃດໜຶ່ງ ທີ່ມີການເຊື່ອມຕໍ່ສັນຍານອິນເຕີເນັດຈາກຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ;
2. **ການໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ** (Internet Service Provider ຫຼື ISP) ໝາຍເຖິງ ການສະໜອງບໍລິການເຊື່ອມຕໍ່ອິນເຕີເນັດໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງໂດຍມີຂອບເຂດພື້ນທີ່ໃຫ້ບໍລິການ ຕາມປະເພດທີ່ໄດ້ຮັບອະນຸຍາດ;
3. **ການໃຫ້ບໍລິການທາງອອກອິນເຕີເນັດ** (International Internet Gateway ຫຼື IIG) ໝາຍເຖິງ ການບໍລິການ ເຊື່ອມຕໍ່ອິນເຕີເນັດພາຍໃນ ໄປຍັງເຄືອຂ່າຍອິນເຕີເນັດສາກົນ;
4. **ສູນກາງເຊື່ອມຕໍ່** (National Internet Exchange ຫຼື NIX) ໝາຍເຖິງ ການບໍລິການເປັນຈຸດເຊື່ອມຕໍ່ລະຫວ່າງ ຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ ພາຍໃນປະເທດ;
5. **ສູນກາງ ຂໍ້ມູນ ຂ່າວສານ** (Internet Data Center) ໝາຍເຖິງ ການໃຫ້ບໍລິການ ເຊົ່າພື້ນທີ່ຕິດຕັ້ງອຸປະກອນ, ເຊົ່າບ່ອນວາງເຄື່ອງເຊີເວີ, ເຊົ່າໃຊ້ເຊີເວີ, ເຊົ່າພື້ນທີ່ເຊີເວີ, ເຊົ່າໃຊ້ຊອບແວ, ເຊົ່າໃຊ້ຖານຂໍ້ມູນ ແລະ ອື່ນໆ;
6. **ບໍລິການ ຄຣາວ** (Cloud Service) ໝາຍເຖິງ ການສະໜອງບໍລິການທີ່ມີລັກສະນະນຳໃຊ້ຊັບພະຍາກອນຮ່ວມກັນ ໂດຍຜ່ານອິນເຕີເນັດ ເປັນຕົ້ນ ໂປຼແກຼມນຳໃຊ້ ແລະ ຖານຂໍ້ມູນ;
7. **ບໍລິການຂໍ້ມູນ ຂ່າວສານ ໃນຮູບແບບເອເລັກໂຕຣນິກ** (Digital Contents) ໝາຍເຖິງ ການບໍລິການຂໍ້ມູນ ຂ່າວສານຕ່າງໆຜ່ານລະບົບອິນເຕີເນັດ;
8. **ການບໍລິການທີ່ປຶກສາ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ** ໝາຍເຖິງ ການໃຫ້ບໍລິການເປັນທີ່ປຶກສາ, ຜູ້ຊ່ວຍວິເຄາະ, ສະເໜີແຜນເພື່ອຕອບໂຈດຄວາມຕ້ອງການ ລວມທັງການຄົ້ວຄວ້າວິໄຈການຕະຫຼາດດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ;
9. **ການບໍລິການຝຶກອົບຮົມ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ** ໝາຍເຖິງ ການໃຫ້ບໍລິການສິດສອນໄລຍະສັ້ນ ແລະ ເປີດຝຶກອົບຮົມສະເພາະທາງ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ;
10. **ບໍລິການຄວາມປອດໄພ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ** ໝາຍເຖິງ ການບໍລິການສະໜອງບຸກຄະລາກອນ, ອຸປະກອນ ແລະ ໂປຼແກຣມຕ່າງໆ ເພື່ອຄວາມປອດໄພດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ເປັນຕົ້ນ ການອອກແບບ-ປັບປຸງ-ພັດທະນາ ຜະລິດຕະພັນຮັກສາຄວາມປອດໄພ, ການບຳລຸງຮັກສາ ແລະ ຮັບປະກັນຄວາມປອດໄພ, ການກວດສອບ ແລະ ປະເມີນຜົນລະບົບຄວາມປອດໄພ;
11. **ການຜະລິດ, ປະກອບ ອຸປະກອນເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ** ໝາຍເຖິງ ໂຮງງານ ແລະ ບໍລິສັດຕ່າງໆ ທີ່ຜະລິດ, ປະກອບອຸປະກອນຄົບຊຸດ ຫຼື ສະເພາະບາງຊິ້ນສ່ວນ ທີ່ກ່ຽວຂ້ອງກັບເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ເປັນຕົ້ນ: ໂຮງງານຜະລິດຊິ້ນສ່ວນເອເລັກໂຕຣນິກ, ໂຮງງານປະກອບອຸປະກອນເອເລັກໂຕຣນິກ ແລະ ອື່ນໆ ທີ່ກ່ຽວຂ້ອງ;

12. **ການສ້າງ ແລະ ບໍລິການ ຊອບແວ** ໝາຍເຖິງ ການສ້າງ, ປັບປຸງ, ດັດແປງ, ແກ້ໄຂ ແລະ ຕິດຕັ້ງ ໂປຼແກຼມຕ່າງໆ ທີ່ນໍາໃຊ້ໃນຄອມພິວເຕີ, ແທັບເລັດ ແລະ ມືຖື ເປັນຕົ້ນ: ສ້າງໂປຼແກຼມບໍລິຫານຫ້ອງການຜ່ານອິນເຕີເນັດ, ໂປຼແກຼມຄຸ້ມຄອງການຂາຍຜ່ານອິນເຕີເນັດ, ໂປຼແກຣມໃຊ້ຜ່ານອິນເຕີເນັດ ແລະ ໂທລະສັບມືຖື;
13. **ການນໍາເຂົ້າ ແລະ ຈໍາໜ່າຍ** ໝາຍເຖິງ ການນໍາເຂົ້າອຸປະກອນຮາດແວ ແລະ ຊອບແວ ຈາກຕ່າງປະເທດ, ຈໍາໜ່າຍ ບັນດາຊອບແວ, ຮາດແວ ແລະ ອຸປະກອນເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານອື່ນໆ;
14. **ການບໍລິການ ຕິດຕັ້ງ, ສ້ອມແປງ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ** ໝາຍເຖິງ ການບໍລິການ ຕິດຕັ້ງ, ສ້ອມແປງ, ບໍາລຸງຮັກສາ, ຮື້ຖອນ ແລະ ຍົກຍ້າຍ ອຸປະກອນດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ເປັນຕົ້ນ: ບໍລິສັດຮັບຕິດຕັ້ງລະບົບອິນເຕີເນັດ, ຮັບສ້ອມແປງເຄື່ອງໃຊ້ອິນເຕີເນັດ;
15. **ການປະກອບການອື່ນ** ໝາຍເຖິງ ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ອື່ນໆ ທີ່ບໍ່ທັນໄດ້ລະບຸໄວ້ໃນລາຍການ ຂ້າງເທິງ ເປັນຕົ້ນ: ການບໍລິການ OTT, ບໍລິການທີ່ເກີດຂຶ້ນໃໝ່ ແລະ ອື່ນໆ.

**ມາດຕາ 4. ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ອົງການຄຸ້ມຄອງ ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ.

## ໝວດທີ 2
## ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ

**ມາດຕາ 5. ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ**

ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ປະກອບມີ ດັ່ງນີ້:

1. **ການໃຫ້ບໍລິການອິນເຕີເນັດ ການເຟ;**
   - ກ. **ການໃຫ້ບໍລິການອິນເຕີເນັດກາເຟ ປະເພດທີ 1 :** ແມ່ນ ການປະກອບການ ສະໜອງບໍລິການເຂົ້າເຖິງອິນເຕີເນັດສະເພາະ ເປັນຕົ້ນ ຮ້ານອິນເຕີເນັດ.
   - ຂ. **ການໃຫ້ບໍລິການອິນເຕີເນັດກາເຟ ປະເພດທີ 2 :** ແມ່ນ ການສະໜອງບໍລິການເຂົ້າເຖິງອິນເຕີເນັດ ໃຫ້ແກ່ຜູ່ມາໃຊ້ບໍລິການທຸລະກິດອື່ນ ຂອງຕົນ ເປັນຕົ້ນ: ຮ້ານກິນດື່ມ, ສະຖານບັນເທີງ, ຮ້ານສັບພະສິນຄ້າ, ພັດທະຄານ, ອາພາດເມັ້ນ , ບ້ານພັກ, ໂຮງແຮມ,ໂຮງໝໍ, ສະຖາບັນການສຶກສາ ແລະ ສະຖານທີ່ສາທາລະນະ ອື່ນໆ.
2. **ການໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ;**
   - ກ. **ໃບອະນຸຍາດປະເພດ 1 :** ແມ່ນໃບອະນຸຍາດສໍາລັບ ຜູ່ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດທີ່ມີເຄືອຂ່າຍ ເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດ ທົ່ວປະເທດ.
   - ຂ. **ໃບອະນຸຍາດປະເພດ 2 :** ແມ່ນໃບອະນຸຍາດສໍາລັບ ຜູ່ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດທີ່ມີ ຫຼື ບໍ່ມີເຄືອຂ່າຍ ເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດ ແຂວງ/ນະຄອນ.

ຄ. **ໃບອະນຸຍາດປະເພດ 3 :** ແມ່ນໃບອະນຸຍາດສຳລັບ ຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດທີ່ມີ ຫຼື ບໍ່ມີເຄືອຂ່າຍ ເປັນຂອງຕົນເອງ, ສາມາດໃຫ້ບໍລິການໃນຂອບເຂດ ເມືອງ.

3. **ການໃຫ້ບໍລິການທາງອອກອິນເຕີເນັດ;**
4. **ສູນກາງເຊື່ອມຕໍ່;**
5. **ສູນກາງຂໍ້ມູນ ຂ່າວສານ;**
6. **ບໍລິການ ຄຣາວ;**
7. **ບໍລິການຂໍ້ມູນ ຂ່າວສານ ໃນຮູບແບບເອເລັກໂຕຣນິກ;**
8. **ບໍລິການທີ່ປຶກສາດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ;**
9. **ບໍລິການຝຶກອົບຮົມ ທາງດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ;**
10. **ບໍລິການຄວາມປອດໄພ ທາງດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ;**
11. **ການຜະລິດ, ປະກອບ ອຸປະກອນເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ;**
    - **ກ. ຜະລິດອຸປະກອນ ແລະ ຊິ້ນສ່ວນ ເອເລັກໂຕຣນິກ.**
    - **ຂ. ປະກອບ ອຸປະກອນເອເລັກໂຕຣນິກ.**
12. **ການສ້າງ ແລະ ບໍລິການ ຊອບແວ;**
13. **ການນຳເຂົ້າ ແລະ ຈຳໜ່າຍ;**
14. **ການບໍລິການຕິດຕັ້ງ, ສ້ອມແປງ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ;**
15. **ການປະກອບການອື່ນ.**

## ໝວດທີ 3
## ການແບ່ງຂັ້ນຄຸ້ມຄອງ ການປະກອບການດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ

### ມາດຕາ 6. ການແບ່ງຂັ້ນຄຸ້ມຄອງ

ໃນການຄຸ້ມຄອງ ການປະກອບການ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ ມອບໃຫ້ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສູນກາງ ແລະ ທ້ອງຖິ່ນ ປະຕິບັດດັ່ງນີ້:

- ສູນກາງ: ແມ່ນ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ ການປະກອບການປະເພດນັ້ນ;
- ທ້ອງຖິ່ນ: ແມ່ນ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຂັ້ນທ້ອງຖິ່ນ ເປັນຜູ້ຄຸ້ມຄອງ ການປະກອບການປະເພດນັ້ນ;
- ຂໍທິດນຳ: ແມ່ນ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຂັ້ນທ້ອງຖິ່ນ ເປັນຜູ້ຄຸ້ມຄອງໂດຍຕ້ອງໄດ້ຮັບການເຫັນດີ ຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

❖ ຕາຕະລາງແບ່ງຂັ້ນຄຸ້ມຄອງ

| ລ/ດ | ລາຍການ | ສູນກາງ | ທ້ອງຖິ່ນ | ຂໍທິດນຳ |
|---|---|---|---|---|
| 1 | ການໃຫ້ບໍລິການອິນເຕີເນັດ ກາເຟ; | | | |
| | ກ. ການໃຫ້ບໍລິການອິນເຕີເນັດກາເຟ ປະເພດ 1 | | + | |
| | ຂ. ການໃຫ້ບໍລິການອິນເຕີເນັດກາເຟ ປະເພດ 2 | | + | |
| 2 | ການໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ (ISP); | | | |
| | ກ. ໃບອະນຸຍາດ ປະເພດ 1 | + | | |
| | ຂ. ໃບອະນຸຍາດ ປະເພດ 2 | | | + |
| | ຄ. ໃບອະນຸຍາດ ປະເພດ 3 | | + | |
| 3 | ການບໍລິການທາງອອກອິນເຕີເນັດ (IIG); | + | | |
| 4 | ສູນກາງເຊື່ອມຕໍ່ (NIX); | + | | |
| 5 | ສູນກາງຂໍ້ມູນ ຂ່າວສານ (Internet Data Centre); | + | | |
| 6 | ບໍລິການຄຣາວ (Cloud); | + | | |
| 7 | ບໍລິການຂໍ້ມູນ ຂ່າວສານ ໃນຮູບແບບເອເລັກໂຕຣນິກ (Digital Contents); | | | + |
| 8 | ບໍລິການທີ່ປຶກສາ ທາງດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ; | | | + |
| 9 | ບໍລິການ ຝຶກອົບຮົມ ທາງດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ. | | | + |
| 10 | ບໍລິການຄວາມປອດໄພ ທາງດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ; | + | | |
| 11 | ການຜະລິດ, ປະກອບ ອຸປະກອນເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ; | | | |
| | ກ. ຜະລິດອຸປະກອນ ແລະ ຊິ້ນສ່ວນ ເອເລັກໂຕຣນິກ. | | | + |
| | ຂ. ປະກອບ ອຸປະກອນເອເລັກໂຕຣນິກ. | | | + |
| 12 | ການສ້າງ ແລະ ບໍລິການ ຊອບແວ; | | | + |
| 13 | ການນຳເຂົ້າ ແລະ ຈຳໜ່າຍ; | | | + |
| 14 | ການບໍລິການຕິດຕັ້ງ, ສ້ອມແປງ ດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນ ຂ່າວສານ | | | + |
| 15 | ການປະກອບການອື່ນ. | | | + |

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 7. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີຂໍ້ມູນ ຂ່າວສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 8. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

ທຽມ ພົມມະຈັນ